ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ ເລກທີ: 197 /ຊກ

ເຊກອງ, ລົງວັນທີ: 01. 09. 2025

# ຂໍ້ຕົກລົງ

# ວ່າດ້ວຍ ການຄຸ້ມຄອງກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ

- ອີງຕາມ ມາດຕາ 20 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ ມາດຕາ 46 ກົດໝາຍວ່າດ້ວຍຊົນລະປະທານ ສະບັບເລກທີ 26/ສພຊ, ລົງວັນທີ 14 ທັນວາ 2012.
- ອີງຕາມ ມາດຕາ 82 ກົດໝາຍວ່າດ້ວຍສ້າງນິຕິກຳ ສະບັບປັບປຸງປີ 2021; ເລກທີ 06/ສພຊ,ລົງວັນທີ 16 ພະຈິກ 2021.
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາປະຊາຊົນແຂວງ ຊຸດທີ II; ສະບັບເລກທີ 138/ສພຂ. ຊກ ,ລົງວັນທີ 23 ກໍລະກົດ 2025.

## ເຈົ້າແຂວງ ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ກ່ຽວກັບການຄຸ້ມຄອງກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ໃຫ້ມີການເຄື່ອນໄຫວ ຄຸ້ມຄອງນຳໃຊ້ ແລະ ປົກປັກຮັກສາລະບົບຊົນລະປະທານ, ແນ່ໃສ່ບໍລິຫານຈັດການນ້ຳ ໃຫ້ທົ່ວເຖິງເຂດພື້ນທີ່ການຜະລິດ ແລະ ນຳໃຊ້ນ້ຳໃຫ້ມີປະສິດທິຜົນສູງ.

**ມາດຕາ 2 ການຄຸ້ມຄອງກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ**

ການຄຸ້ມຄອງກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ແມ່ນການຊຸກຍູ້, ຕິດຕາມ, ກວດກາ ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ໃຫ້ເຄື່ອນໄຫວບໍລິຫານຈັດການນ້ຳ, ປົກປັກຮັກສາລະບົບຊົນລະປະທານ ໃຫ້ມີຄວາມຍືນຍົງ ແລະ ເກີດຜົນປະໂຫຍດສູງສຸດ.

ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ຂຽນຫຍໍ້ວ່າ: "ກນຊ" ແມ່ນ ການລວມຕົວກັນຂອງຊາວກະສິກອນ ທີ່ມີຈຸດປະສົງອັນດຽວກັນ, ມີຜົນປະໂຫຍດຮ່ວມກັນ ສະໝັກໃຈສ້າງຕັ້ງກຸ່ມຂຶ້ນ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. ຊົນລະປະທານໝາຍເຖິງ ລະບົບການສະໜອງນໍ້າ ແລະ ການລະບາຍນໍ້າເພື່ອການຜະລິດກະສິກໍາ ເຊິ່ງປະກອບດ້ວຍລະບົບຫົວງານ, ລະບົບທົດເພື່ອປ້ອງກັນຕ້ານແລ້ງ ແລະ ລະບົບລະບາຍປ້ອງກັນນໍ້າຖ້ວມ;

2. ການຄຸ້ມຄອງນໍາໃຊ້ຊົນລະປະທານປະກອບມີ ຄະນະບໍລິຫານກຸ່ມນໍາໃຊ້ນໍ້າຊົນລະປະທານໝາຍເຖິງ ຄະນະບຸກຄົນທີ່ເປັນຕົວແທນຂອງ ສະມາຊິກເຊິ່ງໄດ້ຮັບການເລືອກຕັ້ງ ຈາກກອງປະຊຸມສະມາຊິກໃຫ້ດໍາລົງຕໍາແໜ່ງເປັນຄະນະບໍລິຫານ ຕາມທີ່ໄດ້ກໍານົດໄວ້ໃນ ພາລະບົດບາດຂອງກຸ່ມ;

3. ສະມາຊິກໝາຍເຖິງ ບຸກຄົນເປັນເຈົ້າຂອງດິນ ຫຼື ບຸກຄົນ ທີ່ບໍ່ແມ່ນເຈົ້າຂອງດິນໃນຂອບເຂດໂຄງການຊົນລະປະທານ ໂດຍສະໝັກໃຈເຂົ້າຮ່ວມຂະບວນການຂອງກຸ່ມ ແລະ ຍອມຮັບຂໍ້ກໍານົດກົດລະບຽບ;

4. ຊາວກະສິກອນໝາຍເຖິງ ຜູ້ທີ່ເຮັດການຜະລິດກະສິກໍາເປັນອາຊີບເຊັ່ນ: ປູກຝັງ, ລ້ຽງສັດ ແລະ ການປະມົງ;

5.ພັນທະຂອງສະມາຊິກໝາຍເຖິງ ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງສະມາຊິກທີ່ຕ້ອງໄດ້ປະຕິບັດຕາມກົດລະບຽບຂອງກຸ່ມນໍາໃຊ້ນໍ້າຊົນລະປະທານ ແລະ ການມອບໝາຍ ຂອງຄະນະບໍລິຫານກຸ່ມ;

6. ການແຈກຢາຍນໍ້າຊົນລະປະທານແບບຮອບວຽນ ໝາຍເຖິງ ການແຈກຢາຍນໍ້າຢ່າງມີແຜນການ ແລະ ປະຢັດ ດ້ວຍການໝູນວຽນນໍາໃຊ້ນໍ້າ ປະຈໍາອາທິດ ຂອງຄອງເໝືອງຂັ້ນສອງ ແຕ່ລະເຂດ;

7. ເຂດສະຫງວນສິດຊົນລະປະທານໝາຍເຖິງ ຂອບເຂດທີ່ບໍ່ອະນຸຍາດ ສິ່ງປຸກສ້າງອື່ນໆຕໍ່ກິດຈະກໍາຊົນລະປະທານ;

8. ກອງທຶນໝາຍເຖິງ ການປະກອບສ່ວນ ຂອງປະຊາຊົນຊາວກະສິກອນຜູ້ໄດ້ຮັບຜົນປະໂຫຍດ ໄດ້ມາຈາກເກັບເງິນຄ່ານໍາໃຊ້ນໍ້າຊົນລະປະທານ ແລະ ການປະກອບສ່ວນອື່ນໆ ຕາມກົດລະບຽບ ຂອງກຸ່ມນໍາໃຊ້ນໍ້າ;

9. ເຈົ້າຂອງການຜະລິດກະສິກໍາໝາຍເຖິງ ຜູ້ທີ່ນໍາໃຊ້ນໍ້າເຂົ້າໃນການຜະລິດຕົວຈິງ;

10. ລະບົບຄອງເໝືອງໝາຍເຖິງ ຄອງສົ່ງນໍ້າສູ່ເນື້ອທີ່ທໍາການຜະລິດເຊັ່ນ: ຄອງເໝືອງແມ່, ຄອງຂັ້ນສອງ ແລະ ຄອງຂັ້ນສາມ;

11. ອາຄານຕາມຄອງເໝືອງໝາຍເຖິງ ບັນດາອາຄານເຊິ່ງປະກອບດ້ວຍ ປະຕູນໍ້າ, ອາຄານແບ່ງນໍ້າ, ອາຄານຍົກນໍ້າ, ອາຄານລະບາຍນໍ້າຂ້າງຄອງ ບໍ່ໃຫ້ນໍ້າໄຫຼລົ້ນຜ່ານສັນຄອງເໝືອງ, ອາຄານຕັນນໍ້າທ້າຍຄອງ, ທໍ່ລອດຄອງເໝືອງ ແລະ ຂົວຂ້າມຕາມຄອງເໝືອງ.

**ມາດຕາ 4 ຫຼັກການ**

ຫຼັກການກ່ຽວກັບການຄຸ້ມຄອງກຸ່ມນໍາໃຊ້ນໍ້າຊົນລະປະທານມີດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບນະໂຍບາຍ, ກົດໝາຍ, ລະບຽບການ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນພັດທະນາ ຂອງຂະແໜງການກະສິກໍາ ແລະ ສິ່ງແວດລ້ອມ;

2. ສອດຄ່ອງກັບຫຼັກການ, ການມີສ່ວນຮ່ວມຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວ ຂ້ອງ;

3. ຮັບປະກັນການຄຸ້ມຄອງຢ່າງລວມສູນ, ເປັນເອກະພາບ, ສະເໝີພາບ ແລະ ໂປ່ງໃສ;

4. ຮັບປະກັນການຄຸ້ມຄອງ, ປົກປັກຮັກສາກິດຈະກໍາຊົນລະປະທານ ແລະ ການນໍາໃຊ້ນໍ້າໃຫ້ເກີດປະໂຫຍດສູງສຸດ;

5. ຮັບປະກັນສິດ ແລະ ຜົນປະໂຫຍດ ຂອງສະມາຊິກກຸ່ມນໍາໃຊ້ນໍ້າ;

**ມາດຕາ 5 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນກັບລະບົບຊົນລະປະທານ, ກຸ່ມນໍາໃຊ້ນໍ້າຊົນລະປະທານ ໃນຂອບເຂດທົ່ວແຂວງເຊກອງ.

## ໝວດທີ 2

## ທີ່ຕັ້ງພາລະບົດບາດ ແລະ ການສ້າງຕັ້ງກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ

**ມາດຕາ 6 ທີ່ຕັ້ງພາລະບົດບາດ**

ກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານແມ່ນ ການຈັດຕັ້ງກຸ່ມການຜະລິດກະສິກໍາ ທີ່ຂຶ້ນກັບບ້ານທີ່ມີຊົນລະປະທານມີພາລະບົດບາດເປັນເສນາທິການໃຫ້ ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງ, ພະແນກກະສິກໍາ ແລະ ສິ່ງແວດລ້ອມ ໃນການຄຸ້ມຄອງ, ບໍລິຫານຈັດການນໍ້າຊົນລະປະທານ.

**ມາດຕາ 7 ການສ້າງຕັ້ງກຸ່ມ**

ການສ້າງຕັ້ງກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ ປະຕິບັດຕາມຂັ້ນຕອນດັ່ງນີ້:

1. ອົງການປົກຄອງຂັ້ນເມືອງ ເປັນຜູ້ຕົກລົງແຕ່ງຕັ້ງກຸ່ມຕາມການສະເໜີຂອງອົງການປົກຄອງຂັ້ນບ້ານ;

2. ການປະກອບເອກະສານ ປະກອບມີ: ໃບຄໍາຮ້ອງ, ບັນຊີລາຍຊື່ຄະນະບໍລິຫານກຸ່ມ, ສະມາຊິກກຸ່ມ, ບົດບັນທຶກກອງປະຊຸມສ້າງຕັ້ງກຸ່ມ, ໂຄງຮ່າງການຈັດຕັ້ງ ແລະ ລະບຽບຂອງກຸ່ມ ໂດຍມີການປະສານສົມທົບກັບຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງ;

3. ພາຍຫຼັງອົງການປົກຄອງເມືອງຮັບຮອງການສ້າງຕັ້ງກຸ່ມແລ້ວ ຕ້ອງໄດ້ໄປຂຶ້ນທະບຽນນໍາຫ້ອງການການເງິນເມືອງ.

**ມາດຕາ 8 ເງື່ອນໄຂການສ້າງຕັ້ງກຸ່ມ**

ການສ້າງຕັ້ງກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ ປະຕິບັດຕາມເງື່ອນໄຂດັ່ງນີ້:

1. ມີສະມາຊິກຂອງກຸ່ມ 5 ຄົນຂຶ້ນໄປ ເຊິ່ງເປັນພົນລະເມືອງລາວ ອາຍຸ 18 ປີຂຶ້ນໄປ ແລະ ສະມາຊິກທຸກຄົນບໍ່ໄດ້ຢູ່ໃນສໍາມະໂນຄົວດຽວກັນ;

2. ເປັນເຈົ້າຂອງການຜະລິດກະສິກໍາ ທີ່ນໍາໃຊ້ນໍ້າຊົນລະປະທານ.

## ໝວດທີ 3

## ໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງກຸ່ມ

**ມາດຕາ 9 ໂຄງປະກອບກົງຈັກການຈັດຕັ້ງຂອງກຸ່ມ**

ໂຄງປະກອບກົງຈັກການຈັດຕັ້ງກຸ່ມຜູ້ນໍາໃຊ້ນໍ້າປະກອບດ້ວຍ:

1. ຄະນະກອດກາກຸ່ມ;

2. ຄະນະບໍລິຫານກຸ່ມ;

3. ໜ່ວຍງານທີ່ກ່ຽວຂ້ອງ;

4. ສະມາຊິກກຸ່ມນຳໃຊ້ນ້ຳ;

**ມາດຕາ 10 ບຸກຄະລາກອນ ຂອງກຸ່ມ**

ບຸກຄະລາກອນ ຂອງກຸ່ມຜູ້ນຳໃຊ້ນ້ຳປະກອບດ້ວຍ:

1. ປະທານຄະນະບໍລິຫານກຸ່ມ;
2. ຄະນະບໍລິຫານກຸ່ມ;
3. ທີ່ປຶກສາຂອງກຸ່ມ;
4. ຫົວໜ້າໜ່ວຍງານກ່ຽວຂ້ອງ;
5. ສະມາຊິກຂອງກຸ່ມຜູ້ນຳໃຊ້ນ້ຳ.

**ມາດຕາ 11 ສິດ ແລະ ໜ້າທີ່ ຂອງກຸ່ມ**

ສິດ ແລະ ໜ້າທີ່ຂອງກຸ່ມນຳໃຊ້ນ້ຳຊົນລະປະທານມີສິດຕົ້ນຕໍດັ່ງນີ້:

1. ເຄື່ອນໄຫວຕາມແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບ ຂອງກຸ່ມ;

2. ຮັບສະມາຊິກຢ່າງເປີດກວ້າງ ບົນພື້ນຖານດ້ວຍຄວາມສະໝັກໃຈ;

3. ໄດ້ຮັບການຊ່ວຍເຫຼືອ ຫຼື ການແນະນຳຈາກພາກລັດ, ເອກະຊົນ ແລະ ຕ່າງປະເທດ ທາງດ້ານວິຊາການ ແລະ ການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ;

4. ເປັນເຈົ້າກຳມະສິດວັດຖຸຊັບສິນ ແລະ ຜົນທີ່ໄດ້ຮັບ ຈາກການດຳເນີນງານຂອງຕົນ ຕາມລະບຽບ ຂອງກຸ່ມ;

5. ສ້າງແຜນການສົ່ງນ້ຳ, ຕິດຕາມການເປີດ-ປິດປະຕູນ້ຳຈາກລະບົບຫົວງານ, ອາຄານຕາມຄອງເໝືອງ ໃຫ້ສະມາຊິກຢ່າງທົ່ວເຖິງ ແລະ ເປັນທຳ;

6. ນຳພາສະມາຊິກນຳໃຊ້ນ້ຳປະກອບສ່ວນບຳລຸງຮັກສາ, ສ້ອມແປງລະບົບຊົນລະປະທານ;

7. ລາຍງານບັນຫາ ຫຼື ອຸປະສັກໃນການສົ່ງນ້ຳ ແລະ ການບຳລຸງຮັກສາ, ສ້ອມແປງລະບົບຊົນລະປະທານ ໃຫ້ຂັ້ນເທິງຢ່າງປົກກະຕິ;

8. ໄກ່ເກ່ຍຂໍ້ຂັດແຍ່ງ ບັນຫາການນຳໃຊ້ນ້ຳ ລະຫວ່າງ ສະມາຊິກດ້ວຍກັນ;

9. ເປີດກອງປະຊຸມຢ່າງປົກກະຕິ ເພື່ອປັບປຸງການໃຊ້ນ້ຳ ແລະ ພັດທະນາກຸ່ມນຳໃຊ້ນ້ຳຊົນລະປະທານໃຫ້ດີຂຶ້ນ;

10. ສ້າງແຜນການຄາດຄະເນລາຍຮັບ ຈາກການເກັບເງິນຄ່ານ້ຳ, ລາຍຈ່າຍການຟື້ນຟູ-ສ້ອມແປງ ແລະ ການບໍລິຫານຈັດການນ້ຳເຂົ້າໃນການຜະລິດກະສິກຳ ໃນແຕ່ລະລະດູການຜະລິດ;

11. ເກັບຄ່ານ້ຳຊົນລະປະທານ ຈາກສະມາຊິກແຕ່ລະລະດູການຜະລິດ;

12. ມີການສະຫຼຸບ, ລາຍງານຜົນການເຄື່ອນໄຫວວຽກງານຂອງກຸ່ມນຳໃຊ້ນ້ຳ ປະຈຳລະດູການຜະລິດ;

13. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງກຸ່ມ.

- ສໍາລັບສິດ ແລະ ໜ້າທີ່ ຂອງ ປະທານ, ຄະນະບໍລິຫານງານກຸ່ມ, ທີ່ປຶກສາ, ໜ່ວຍງານຕ່າງໆ ໃຫ້ປະຕິບັດຕາມ ມາດຕາ 18 ຂອງ ຂໍ້ຕົກລົງວ່າດ້ວຍ ການສ້າງຕັ້ງ ແລະ ການຄຸ້ມຄອງກຸ່ມນໍາໃຊ້ນໍ້າຊົນລະປະທານ ສະບັບເລກທີ 0036/ກປ; ລົງວັນທີ 4 ມັງກອນ 2024;

**ມາດຕາ 12 ສິດ ແລະ ໜ້າທີ່ຂອງສະມາຊິກກຸ່ມນໍາໃຊ້ນໍ້າຊົນລະປະທານ**

ສິດ ແລະ ໜ້າທີ່ຂອງສະມາຊິກກຸ່ມນໍາໃຊ້ນໍ້າຊົນລະປະທານ ປະຕິບັດດັ່ງນີ້:

1. ເຊື່ອມຊຶມ ແລະ ປະຕິບັດຕາມແນວທາງຂອງພັກ, ກົດໝາຍ, ກົດລະບຽບ ຂອງກຸ່ມ ແລະ ຄະນະບໍລິຫານກຸ່ມ;
2. ເປັນເຈົ້າການປົກປັກຮັກສາ ແລະ ຄຸ້ມຄອງນໍາໃຊ້ລະບົບຊົນລະປະທານໃຫ້ມີປະສິດທິຜົນ;
3. ນໍາໃຊ້ນໍ້າຕາມການແບ່ງປັນ ແລະ ຕາມການຕົກລົງເຫັນດີຂອງຄະນະກຸ່ມ;
4. ເຂົ້າຮ່ວມກອງປະຊຸມ, ປະກອບຄໍາຄິດເຫັນ, ຍົກລະດັບ ແລະ ການກໍານົດນະໂຍບາຍຂອງກຸ່ມ;
5. ເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ເປັນຄະນະບໍລິຫານກຸ່ມ;
6. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງສະມາຊິກກຸ່ມ;
7. ເສຍພັນທະຄ່ານໍາໃຊ້ນໍ້າຊົນລະປະທານ ແລະ ການປະກອບສ່ວນອື່ນໆ.

## ໝວດທີ 4
## ເຂດສະຫງວນສິດ

**ມາດຕາ 13 ເຂດສະຫງວນສິດ**

ເຂດສະຫງວນສິດຊົນລະປະທານ ແມ່ນເຂດຫ້າມທໍາການຜະລິດ, ປຸກສ້າງ ຫຼື ກິດຈະກໍາໃດໆຢູ່ໃນເຂດບໍລິເວນດັ່ງກ່າວ ເຊິ່ງປະກອບດ້ວຍ:

1. ເຂດອ່າງເກັບນໍ້າ, ຝາຍນໍ້າລົ້ນ ແລະ ປະຕູນໍ້າ;
2. ລະບົບຄອງເໝືອງ ແລະ ອາຄານຕາມຄອງເໝືອງ.

**ມາດຕາ 14 ເຂດສະຫງວນສິດອ່າງເກັບນໍ້າ ແລະ ຝາຍນໍ້າລົ້ນ**

ເຂດສະຫງວນສິດອ່າງເກັບນໍ້າແມ່ນເຂດລະບົບໂຕເຂື່ອນດິນ, ສັນເຂື່ອນ, ສະຫຼົບດ້ານໜ້າ-ຫຼັງ, ລະບົບທາງລະບາຍນໍ້າລົ້ນ (Spillway), ລະບົບປະຕູເປີດ-ປິດນໍ້າ ເພື່ອສົ່ງນໍ້າເຂົ້າຄອງເໝືອງແມ່, ເຂດໜ້າອ່າງໃນລະ ດັບນໍ້າປົກກະຕິ, ເຂດຫຼັງຕີນເຂື່ອນດິນ ເຊິ່ງມີເຂດສະຫງວນສິດຄວາມຍາວ ໃຫຍ່ກວ່າ ຫຼື ເທົ່າ 150 ແມັດ;

ເຂດສະຫງວນສິດຝາຍນໍ້າລົ້ນແມ່ນ ເຂດທີ່ຕັ້ງຫົວງານ, ປະຕູເອົານໍ້າ, ຝາຍນໍ້າລົ້ນ ມີເຂດສະຫງວນສິດ ຄວາມຍາວໃຫຍ່ກວ່າ ຫຼື ເທົ່າກັບ 100 ແມັດ, ຫ່າງຈາກໂຕຝາຍຂຶ້ນເທິງ ແລະ ລົງລຸ່ມຕາມແລວນໍ້າ, ຂ້າງຊ້າຍ ແລະ ຂວາ ຂອງໂຕຝາຍ ໂດຍແທກອອກຈາກຝາກັ້ນດິນດ້ານຂ້າງຄວາມຍາວ ໃຫຍ່ກວ່າ ຫຼື ເທົ່າ 25 ແມັດ, ທາງເຂົ້າຫາຫົວງານຄວາມກວ້າງໃຫຍ່ກວ່າ ຫຼື ເທົ່າກັບ 5 ແມັດ.

**ມາດຕາ 15 ລະບົບຄອງເໝືອງ ແລະ ອາຄານຕາມຄອງເໝືອງ**

ລະບົບຄອງເໝືອງ ແລະ ອາຄານຕາມຄອງເໝືອງ, ເຂດສັນຄອງເໝືອງຂ້າງທາງລົດແລ່ນໄດ້, ຄວາມກວ້າງຂ້າງຊ້າຍ ຫຼື ຂ້າງຂວາ ແທກຈາກຂອບປາກຄອງເໝືອງ ກໍານົດຄວາມກວ້າງ ໃຫ່ຍກວ່າ ຫຼື ເທົ່າ 8 ແມັດ ເປັນໂຄງການຂະໜາດໃຫ່ຍ, ອະນຸຍາດປັກຫຼັກຮົ້ວ ແລະ ສິ່ງປຸກສ້າງອື່ນໆ. ຄວາມກວ້າງໃຫ່ຍກວ່າ ຫຼືເທົ່າ 8.5 ແມັດ, ສະເພາະໂຄງການຂະໜາດກາງ ແລະ ຂະໜາດນ້ອຍ ຄວາມກວ້າງໃຫ່ຍກວ່າ ຫຼື ເທົ່າ 5 ແມັດ, ອະນຸຍາດປັກຫຼັກຮົ້ວ ແລະ ສິ່ງປຸກສ້າງອື່ນໆ ຄວາມກວ້າງໃຫ່ຍກວ່າ ຫຼື ເທົ່າ 5.5 ແມັດ;

## ໝວດທີ 5
## ການຄຸ້ມຄອງ, ປົກປັກຮັກສາ ແລະ ຟື້ນຟູ-ສ້ອມແປງ

**ມາດຕາ 16 ການຄຸ້ມຄອງ ແລະ ປົກປັກຮັກສາ**

ກຸ່ມຜູ້ນໍາໃຊ້ນໍ້າ, ສະມາຊິກຜູ້ນໍາໃຊ້ນໍ້າຊົນລະປະທານຕ້ອງ ປົກປັກຮັກສາລະບົບຊົນລະປະທານໃຫ້ຖືກຕ້ອງ, ສອດຄ່ອງກັບເຕັກນິກ ແລະ ນໍາໃຊ້ໃຫ້ຍືນຍົງ ເປັນຕົ້ນ: ສ້າງຂະບວນການອະນາໄມລະບົບຄອງເໝືອງ, ອາຄານຕາມຄອງ ແລະ ລະບົບທໍ່ອງານຮັບໃຊ້ລະດູແລ້ງ ແລະ ລະດູຝົນມີດັ່ງນີ້:

- ລະດູແລ້ງແມ່ນກໍານົດເອົາວັນທີ 03 ຫາ 10 ພະຈິກ ( 11 ) ຂອງປີ.
- ລະດູຝົນແມ່ນກໍານົດເອົາວັນທີ 03 ຫາ 10 ພຶດສະພາ ( 05 ) ຂອງປີ.

**ມາດຕາ 17 ການຟື້ນຟູ - ສ້ອມແປງ**

ກຸ່ມຜູ້ນໍາໃຊ້ນໍ້າຕ້ອງເປັນເຈົ້າການຕິດຕາມ, ກວດກາ ແລະ ຂຶ້ນແຜນຟື້ນຟູ-ສ້ອມແປງ ຕາມຄວາມຮັບຜິດຊອບ ຂອງຕົນ ເພື່ອເຮັດໃຫ້ລະບົບຊົນລະປະທານຢູ່ໃນສະພາບປົກກະຕິ ແລະ ສາມາດນໍາໃຊ້ໄດ້ ໂດຍແບ່ງຄວາມຮັບຜິດຊອບດັ່ງນີ້:

1. ມູນຄ່າສອ້ມແປງ 5 ລ້ານກີບລົງມາ ແມ່ນ ເປັນຄວາມຮັບຜິດຊອບ ຂອງກຸ່ມນໍາໃຊ້ນໍ້າ;
2. ມູນຄ່າສອ້ມແປງເກີນ 5 ລ້ານກີບ ຫາ 100 ລ້ານກີບ ແມ່ນເປັນຄວາມຮັບຜິດຊອບຂອງອົງການປົກຄອງເມືອງ;
3. ມູນຄ່າສອ້ມແປງເກີນ 100 ລ້ານກີບ ແມ່ນເປັນຄວາມຮັບຜິດຊອບອົງການປົກຄອງແຂວງ;
4. ສ່ວນການລົງທຶນກໍ່ສ້າງ, ສ້ອມແປງຊົນລະປະທານ ປະຈໍາປີ ແມ່ນປະຕິບັດຕາມທິດສາມສ້າງ.

## ໝວດທີ 6
## ກອງທຶນພັດທະນາກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ

**ມາດຕາ 18 ກອງທຶນພັດທະນາກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ**

ກອງທຶນພັດທະນາກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານແມ່ນ ເພື່ອນໍາໃຊ້ເຂົ້າໃນການບໍລິຫານຈັດການລະບົບຊົນລະປະທານ, ສົມທົບທຶນຟື້ນຟູ-ສ້ອມແປງ ຕາມການແບ່ງຄວາມຮັບຜິດຊອບ ຕາມມາດຕາ 17 ຂອງຂໍ້ຕົກລົງສະບັບນີ້. ໂດຍປະຕິບັດຕາມລະບຽບການນໍາໃຊ້ງົບປະມານ ຂອງລັດ.

**ມາດຕາ 19 ແຫຼ່ງທີ່ມາ ຂອງກອງທຶນ**

1. ໄດ້ຈາກການສະໝັກ ຂອງສະມາຊິກກຸ່ມ:

- ສະມາຊິກຖາວອນ 10,000 ກີບ/ປີ;
- ສະມາຊິກຊົ່ວຄາວ 20,000 ກີບ/ປີ;

2. ໄດ້ຈາກການເກັບຄ່ານຳໃຊ້ນ້ຳຊົນລະປະທານ:

- ຄ່ານ້ຳສຳລັບປູກເຂົ້ານາແຊງ 500,000 ກີບ/ເຮັກຕາ;
- ຄ່ານ້ຳສຳລັບປູກເຂົ້ານາປີ 200,000 ກີບ/ເຮັກຕາ;
- ປູກພືດລະດູແລ້ງ 200,000 ກີບ/ເຮັກຕາ;
- ປູກພືດລະດູຝົນ 100,000 ກີບ/ເຮັກຕາ;
- ໜອງສະລ້ຽງສັດນ້ຳ 500,000 ກີບ/ເຮັກຕາ.

**ມາດຕາ 20 ການແບ່ງປັນງົບປະມານກອງທຶນພັດທະນາກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ**

ງົບປະມານທີ່ໄດ້ຈາກພັນທະຕ່າງໆທີ່ມອບເປັນກອງທຶນ ຕ້ອງໄດ້ແບ່ງປັນດັ່ງນີ້:

1. ງົບປະມານຂອງລັດ 10 %;
2. ສ່ວນທີ່ເຫຼືອ 90 % ມາຕັ້ງເປັນ 100 % ແບ່ງອອກດັ່ງນີ້:

- 40 % ມອບເປັນກອງທຶນ ເພື່ອຟື້ນຟູ-ສ້ອມແປງຊົນລະປະທານ ໂດຍຝາກທະນາຄານ;
- 60 % ແມ່ນນຳໃຊ້ເຂົ້າໃນວຽກງານບໍລິຫານງານ ຂອງກຸ່ມ;

## ໝວດທີ 7
## ອົງການຄຸ້ມຄອງກຸ່ມນຳໃຊ້ນ້ຳຊົນລະປະທານ

**ມາດຕາ 21 ການຄຸ້ມຄອງ**

ອົງການປົກຄອງແຂວງ ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໂດຍມອບໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ເປັນໃຈກາງ ປະສານສົມທົບ ກັບ ພາກສ່ວນກ່ຽວຂ້ອງ.

ອົງການຄຸ້ມຄອງກຸ່ມນຳໃຊ້ນ້ຳຊົນລະປະທານ ປະກອບດ້ວຍ:

1. ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ໂດຍແມ່ນ ຂະແໜງຊົນລະປະທານ ເປັນເສນາທິການ;
2. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ໂດຍແມ່ນ ໜ່ວຍງານຊົນລະປະທານ ເປັນເສນາທິການ;
3. ອົງການປົກຄອງບ້ານ ໂດຍແມ່ນ ໜ່ວຍງານເສດຖະກິດ-ການເງິນບ້ານ ເປັນເສນາທິການ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ**

ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນດັ່ງນີ້:

1. ເປັນເສນາທິການໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ອົງການປົກຄອງແຂວງ ໃນການສົ່ງເສີມພັດທະນາ ແລະ ຄຸ້ມຄອງກຸ່ມ ນຳໃຊ້ນ້ຳຢ່າງລວມສູນ ແລະ ເປັນເອກະພາບ;

2. ຄົ້ນຄວ້າ ແລະ ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບກຸ່ມນຳໃຊ້ນ້ຳ ໃຫ້ກາຍເປັນ ແຜນການ, ແຜນງານ, ໂຄງການ ແລະ ລະບຽບການ ແລ້ວນຳສະເໜີຕໍ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ອົງການປົກຄອງແຂວງ ພິຈາລະນາຮັບຮອງ ແລ້ວຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ, ແຜນການ, ແຜນງານຂອງໂຄງການກ່ຽວກັບກຸ່ມນຳໃຊ້ນ້ຳໃຫ້ກ້ວາງຂວາງ ແລະ ທົ່ວເຖິງ;

4. ຄົ້ນຄວ້າໃຫ້ນະໂຍບາຍສົ່ງເສີມກຸ່ມພາຍຫຼັງໄດ້ຮັບອະນຸມັດສ້າງຕັ້ງ ແລະ ຈົດທະບຽນຢ່າງຖືກຕ້ອງຕາມຂໍ້ຕົກລົງສະບັບນີ້;

5. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານກຸ່ມນຳໃຊ້ນ້ຳໂດຍສົມທົບກັບພາກສ່ວນກ່ຽວຂ້ອງ;

6. ບຳລຸງສ້າງ ແລະ ຍົກລະດັບພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານກຸ່ມ;

7. ພົວພັນຮ່ວມມື ກັບຕ່າງປະເທດ, ກ່ຽວກັບວຽກງານກຸ່ມ;

8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກຸ່ມນຳໃຊ້ນ້ຳຊົນລະປະທານ ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ອົງການປົກຄອງແຂວງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ**

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເປັນເສນາທິການໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ອົງການປົກຄອງເມືອງ ໃນການສົ່ງເສີມພັດທະນາ ແລະ ຄຸ້ມຄອງກຸ່ມນຳໃຊ້ນ້ຳ ຢ່າງລວມສູນ ແລະ ເປັນເອກະພາບ;

2. ຄົ້ນຄວ້າ ແລະ ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບ ກຸ່ມນຳໃຊ້ນ້ຳໃຫ້ກາຍເປັນແຜນການ, ແຜນງານ, ໂຄງການ ແລະ ລະບຽບການແລ້ວນຳສະເໜີຕໍ່ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ອົງການປົກຄອງເມືອງ ພິຈາລະນາຮັບຮອງ ແລ້ວຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ, ແຜນການ, ແຜນງານໂຄງການ ຂອງກຸ່ມນຳໃຊ້ນ້ຳໃຫ້ກ້ວາງຂວາງ ແລະ ທົ່ວເຖິງ;

4. ຄົ້ນຄວ້າໃຫ້ນະໂຍບາຍ ສົ່ງເສີມກຸ່ມພາຍຫຼັງໄດ້ຮັບອະນຸມັດສ້າງຕັ້ງ ແລະ ຈົດທະບຽນຢ່າງຖືກຕ້ອງ; ສະເໜີອົງການປົກຄອງເມືອງ ໂຈະ ຫຼື ຖອນໃບອະນຸຍາດ ສ້າງຕັ້ງກຸ່ມ ໃນກໍລະນີທາກສ້າງຄວາມເສຍຫາຍໃຫ້ແກ່ການຄຸ້ມຄອງນຳໃຊ້ນ້ຳຊົນລະປະທານ;

5. ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານກຸ່ມນຳໃຊ້ນ້ຳໂດຍສົມທົບກັບຫ້ອງການກ່ຽວຂ້ອງຂັ້ນເມືອງຊີ້ນຳໜ່ວຍງານຊົນລະປະທານເມືອງ ໃຫ້ໄດ້ຈັດຕັ້ງປະຕິບັດມີຜົນສຳເລັດຕາມຄາດໝາຍແຜນການທີ່ວາງໄວ້;

6. ບຳລຸງສ້າງ ແລະ ຍົກລະດັບພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານກຸ່ມ;

7. ພົວພັນຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານກຸ່ມ;

8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກຸ່ມນຳໃຊ້ນ້ຳຊົນລະປະທານ ໃຫ້ ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ອົງການປົກຄອງເມືອງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ອົງການປົກຄອງບ້ານມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ຂໍ້ມູນຂ່າວສານກ່ຽວກັບວຽກງານກຸ່ມນຳໃຊ້ນ້ຳ ໃຫ້ປະຊາຊົນພາຍໃນບ້ານຂອງຕົນໄດ້ຮັບຊາບ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ;

2. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ແກ່ການກວດກາກຸ່ມນຳໃຊ້ນ້ຳ;

3. ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບວຽກງານ ກຸ່ມນຳໃຊ້ນ້ຳ;

4. ນຳໃຊ້ສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 25 ພັນທະ ຂອງບຸກຄົນ, ນິຕິບຸກຄົນ ຫຼື ຂະແໜງການ**

ຂະແໜງການກ່ຽວຂ້ອງ ມີໜ້າທີ່ໃນການຕິດຕາມ, ກວດກາ, ສະໜອງຂໍ້ມູນ, ປະສານສົມທົບ, ໃຫ້ຄວາມຮ່ວມມື ຫຼື ປະກອບສ່ວນເປັນເງິນ, ວັດຖຸອຸປະກອນ, ແຮງງານ ເຂົ້າໃນການຄຸ້ມຄອງນຳໃຊ້ນ້ຳຊົນລະປະທານ;

ບຸກຄົນ, ນິຕິບຸກຄົນ ມີໜ້າທີ່ເຂົ້າຮ່ວມ ປະກອບສ່ວນ ແລະ ໃຫ້ການຮ່ວມມືໃນວຽກງານຄຸ້ມຄອງນຳໃຊ້ນ້ຳຊົນລະປະທານເປັນຕົ້ນ: ປົກປັກຮັກສາ, ການແຈ້ງເຕືອນ ຫຼື ລາຍງານກ່ຽວກັບການທຳລາຍຊົນລະປະທານ, ການກະທຳທີ່ເປັນການລະເມີດກົດໝາຍ, ການສະກັດກັ້ນຜົນກະທົບທາງລົບ ທີ່ຈະເກີດຂຶ້ນຕໍ່ລະບົບຊົນລະປະທານ.

## ໝວດທີ 8
## ຂໍ້ຫ້າມ

**ມາດຕາ 26 ຂໍ້ຫ້າມສຳລັບຂະແໜງການ**

1. ໃຊ້ສິດໜ້າທີ່ເກີນຂອບເຂດ ເຊິ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ຂອງຜົນປະໂຫຍດກຸ່ມ;

2. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບຕາມການມອບໝາຍ;

3. ສວຍໂອກາດເກັບເງິນ, ກຳນົດຄ່າທຳນຽມທີ່ຂັດກັບຂໍ້ຕົກລົງສະບັບນີ້ ແລະ ນຳໃຊ້ງົບປະມານ, ກອງທຶນໃນທາງທີ່ບໍ່ຖືກຕ້ອງ;

4. ເປີດ-ປິດນ້ຳຊົນລະປະທານໂດຍບໍ່ມີແຜນການ, ຂາດຄວາມຮັບຜິດຊອບເຊິ່ງກໍ່ໃຫ້ເກີດຜົນເສຍຫາຍ;

5. ພຶດຕິກຳອື່ນໆ ທີ່ເປັນການລະເມີດຕໍ່ລະບຽບກົດໝາຍ ຫຼື ຂໍ້ຕົກລົງສະບັບນີ້.

**ມາດຕາ 27 ຂໍ້ຫ້າມທົ່ວໄປ**

1. ເປີດ-ປິດ, ຂຸດເຈາະປະຕູນ້ຳ, ທັບມ້າງອາຄານໂຄງສ້າງຕາມຄອງເໝືອງຕາມລຳພັງໃຈ ເພື່ອການຫາປາ ແລະ ອື່ນໆ;

2. ປັກຫຼັກຮົ້ວກວມສັນຄອງເໝືອງ 2 ຂ້າງ;

3. ຕິດຕັ້ງໄດນາໂມໃນຄອງເໝືອງ;

4. ເຮັດຫອ້ງນ້ຳແຄມຄອງເໝືອງ ( ສວ້ມຖ່າຍ );

5. ຖິ້ມສິ່ງເສດເຫຼືອຕ່າງໆ, ສິ່ງທີ່ເປັນມົນລະພິດ ແລະ ຖ່າຍລົງຄອງເໝືອງ;

6. ປູກຕົ້ນໄມ້, ທຳການຜະລິດ, ປຸກສ້າງອາຄານຕ່າງໆກວມຄອງເໝືອງ ຫຼື ເຂດສະຫງວນສິດຂອງຊົນລະປະທານ;

7. ທຳລາຍລະບົບຄອງເໝືອງ, ຖົມປາກຄອງເໝືອງ, ຕັນຄອງເໝືອງ ແລະ ດັດແປງແລວນ້ຳ, ປ່ຽນຂະໜາດຄອງເໝືອງນອ້ຍລົງ;

8. ນຳໃຊ້ລົດໄຖນາຕີນເຫຼັກ ແລະ ລົດບັນທຸກໜັກເກີນຄ່າອະນຸຍາດແລ່ນຕາມສັນຄອງເໝືອງ;

9. ປະເນື້ອທີ່ທຳການຜະລິດເປົ່າວ່າງ (ໃນກໍລະນີເຈົ້າຂອງເນື້ອທີ່ບໍ່ທຳການຜະລິດຕ້ອງອະນຸຍາດໃຫ້ຜູ້ອື່ນທຳການຜະລິດ);

10. ໃສ່ຮ້າຍປ້າຍສີພະນັກງານທີ່ປະຕິບັດໜ້າທີ່.

## ໝວດທີ 9
## ອົງການຕິດຕາມກວດກາ

**ມາດຕາ 28 ອົງການຕິດຕາມກວດກາ**

1. ອົງການຕິດຕາມກວດກາພາຍໃນ ເຊິ່ງແມ່ນອົງການດຽວກັບອົງການຄຸ້ມຄອງກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ;

2. ອົງການຕິດຕາມກວດກາພາຍນອກ ເຊິ່ງປະກອບມີ: ສະພາປະຊາຊົນແຂວງ, ອົງການກວດກາລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ສື່ມວນຊົນ.

**ມາດຕາ 29 ເນື້ອໃນກວດກາ**

1. ກວດກາການປະຕິບັດນະໂຍບາຍ, ແຜນຍຸດທະສາດການນໍາໃຊ້ນໍ້າ, ການຄຸ້ມຄອງຊົນລະປະທານ ແລະ ການປະຕິບັດຂໍ້ຕົກລົງສະບັບນີ້;

2. ກວດກາການເຄື່ອນໄຫວຂອງກຸ່ມຜູ້ນໍາໃຊ້ນໍ້າ, ການປະຕິບັດໜ້າທີ່ ແລະ ການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກຂໍ້ຕົກລົງສະບັບນີ້;

3. ກວດກາການຈັດຕັ້ງປະຕິບັດກົດລະບຽບ ແລະ ມະຕິກອງປະຊຸມສະມາຊິກກຸ່ມ ຂອງຄະນະບໍລິຫານກຸ່ມ, ຄະນະກວດກາ;

4. ກວດກາການເຄື່ອນໄຫວວຽກງານການເງິນ, ການບັນຊີ, ການນໍາໃຊ້ເງິນກອງທຶນ ແລະ ຊັບສິນບັດຕ່າງໆຂອງກຸ່ມ ລວມທັງການຮ່ວມມືຈາກສະມາຊິກ.

**ມາດຕາ 30 ຮູບແບບການກວດກາ**

1. ກວດກາປົກກະຕິ ແມ່ນກວດກາຕາມແຜນການ ສາມເດືອນ, ຫົກເດືອນ ແລະ ປະຈໍາປີ;

2. ກວດກາໂດຍມີການແຈ້ງ ໃຫ້ຮູ້ລ່ວງໜ້າແມ່ນການກວດການອກແຜນປົກກະຕິ ແຕ່ມີການແຈ້ງໃຫ້ເປົ້າໝາຍກວດກາຊາບລ່ວງໜ້າກ່ອນ ຢ່າງໜ້ອຍ 7 ວັນ;

3. ກວດກາໃນກໍລະນີສຸກເສີນແມ່ນການກວດກາອັນຮີບດ່ວນ ແລະ ບໍ່ຢູ່ໃນແຜນການ.

## ໝວດທີ 10
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 31 ຮູບການແກ້ໄຂຂໍ້ຂັດແຍ່ງ**

ຂໍ້ຂັດແຍ່ງທີ່ເກີດຂຶ້ນໃນກຸ່ມນໍາໃຊ້ນໍ້າຊົນລະປະທານ ເປັນຕົ້ນ: ຂໍ້ຂັດແຍ່ງ ລະຫວ່າງ ສະມາຊິກກັບການຈັດຕັ້ງ ແລະ ກຸ່ມນໍາໃຊ້ນໍ້າຊົນລະປະທານ ດ້ວຍກັນ ຫຼື ກັບພາກສ່ວນອື່ນໆສາມາດດໍາເນີນການແກ້ໄຂດ້ວຍຮູບການ ດັ່ງນີ້:

1. ການໄກ່ເກ່ຍປະນີປະນອມ;
2. ການແກ້ໄຂທາງບໍລິຫານ;
3. ການແກ້ໄຂດ້ວຍການຕັດສິນຂອງສານ.

**ມາດຕາ 32 ການໄກ່ເກ່ຍ**

ຂໍ້ຂັດແຍ່ງທີ່ບໍ່ມີຜົນເສຍຫາຍຫຼາຍ ຫຼື ບໍ່ຮ້າຍແຮງ ແມ່ນໃຫ້ໄກ່ເກ່ຍປະນີປະນອມ ໂດຍການສຶກສາອົບຮົມ, ກ່າວເຕືອນ ມອບໃຫ້ກຸ່ມຜູ້ນໍາໃຊ້ນໍ້າ ແລະ ອົງການປົກຄອງບ້ານໄກ່ເກ່ຍ.

ມາດຕາ 33  ການແກ້ໄຂທາງບໍລິຫານ

ການແກ້ໄຂທາງບໍລິຫານແມ່ນຄະນະບໍລິຫານງານກຸ່ມ, ທີ່ປຶກສາຂອງກຸ່ມ, ອົງການປົກຄອງບ້ານ, ປະສານສົມທົບກັບຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ, ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ແກ້ໄຂທາງບໍລິຫານ.

ມາດຕາ 34  ການແກ້ໄຂດ້ວຍການຕັດສິນຂອງສານ

ໃນກໍລະນີຂໍ້ຂັດແຍ່ງຫາກມີຜົນເສຍຫາຍຫຼາຍ ຫຼື ຮ້າຍແຮງ ແມ່ນໃຫ້ດຳເນີນຄະດີຕາມຂະບວນການຍຸຕິທຳ.

## ໝວດທີ 11
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 35 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນເຂົ້າຮ່ວມ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນໆຕາມລະບຽບການ.

ມາດຕາ 36 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ 20% ຂອງມູນຄ່າເສຍຫາຍ ແລະ ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມ ກໍລະນີ ໜັກ ຫຼື ເບົາ.

## ໝວດທີ 12
## ບົດບັນຍັດສຸດທ້າຍ

ມາດຕາ 37 ການຈັດຕັ້ງປະຕິບັດ

ມອບໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ, ອົງການປົກຄອງບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 38 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີ ຜົນສັກສິດນັບແຕ່ວັນທີລົງລາຍເຊັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການສາມສິບວັນເປັນຕົ້ນໄປ.

ຮັກສາການແທນ ເຈົ້າແຂວງ

ຄຸນຫຼາຍ ບຸດທີ